ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງ ໂຍທາທິການ ແລະຂົນສົ່ງ

ເລກທີ:..2759.......ຍທຂ.

ນະຄອນຫຼວງວຽງຈັນ, ວັນທີ:...28 ພະຈິກ 2018:

ຮຽນ: ທ່ານລັດຖະມົນຕີ, ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ທີ່ນັບຖື.

ເລື່ອງ: ແຈ້ງຕອບຕໍ່ຄໍາສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບສາຍດ່ວນລັດຖະບານ.

- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເລກທີ 350/ຫສນຍ, ລົງວັນທີ 27/06/2018, 493/ຫສນຍ, ລົງວັນທີ 28/08/2018, 499/ຫສນຍ, ລົງວັນທີ 30/08/2018, 530/ຫສນຍ, ລົງວັນທີ 10/9/2018, 574/ຫສນຍ, ລົງວັນທີ 21/09/2018, 620/ຫສນຍ, ລົງວັນທີ 05/10/2018 ແລະ ເລກທີ 658/ຫສນຍ, ລົງວັນທີ 22/10/2018.

ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບການຕອບຄໍາສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບສາຍດ່ວນລັດຖະບານ ມີລາຍລະອຽດດັ່ງນີ້:

1. <u>ປະຊາຊົນນະຄອນຫລວງວຽງຈັນ ສ່ອງແສງໃຫ້ລັດຖະບານຮັບຮູ້ວ່າ ປະຈຸບັນເສັ້ນທາງໃນຕົວເມືອງນະຄອນຫລວງວຽງຈັນ ແມ່ນເປ່ເພຫລາຍ, ເປັນຂຸມໃຫ່ຍ, ທາງຂາດ ການໄປມາກໍ່ພົບຄວາມຫຍຸ້ງຍາກ.</u>

➢ <u>ຕອບ:</u> ກະຊວງ ຍທຂ ໄດ້ມີໜັງສືທາງລັດຖະການ ສະເໜີທ່ານ ເຈົ້າຄອງນະຄອນຫລວງວຽງຈັນ ເພື່ອຊີ້ນໍາພາກສ່ວນກ່ຽວຂ້ອງຂອງອົງການປົກຄອງນະຄອນຫລວງແກ້ໄຂ ຕາມເອກະສານເລກທີ 806/ຍທຂ, ລົງວັນທີ 07 ກໍລະກົດ 2018, ພ້ອມດຽວກັນນັ້ນ ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນໍາໃຫ້ກົມຂົວທາງລົງສົມທົບກັບພະແນກ ຍທຂ ນະຄອນຫລວງວຽງຈັນ ແລະ ຫ້ອງການ ຍທຂ ເມືອງ ລົງກວດກາຕົວຈິງເກັບກໍາຂໍ້ມູນ ແລະ ສັງລວມ, ພ້ອມທັງສະເໜີວິທີແກ້ໄຂຕໍ່ຄະນະນໍານະຄອນຫລວງວຽງຈັນ. ຫລັງຈາກນັ້ນ ທ່ານ ເດດສິງຄາມ ທໍາມະວົງ ຫົວໜ້າພະແນກ ຍທຂ ນະຄອນຫລວງວຽງຈັນ ໄດ້ຊີ້ແຈ້ງຜົນການແກ້ໄຂໃຫ້ສັງຄົມຮັບຊາບຜ່ານທາງໜັງສືພິມວຽງຈັນໃໝ່ ສະບັບລົງວັນທີ 22/10/2018 ແລະ 29/10/2018 ແລ້ວ ວ່າ: ນະຄອນຫລວງວຽງຈັນ (ນວ) ເປັນເມືອງເອກຂອງລາວ ມີປະຊາຊົນດໍາລົງຊີວິດທີ່ໜາແໜ້ນ ລະບົບເສັ້ນທາງມີຈຸດພິເສດທີ່ແຕກຕ່າງຈາກແຂວງອື່ນ ໂດຍສະເພາະແມ່ນການຂະຫຍາຍຕາໜ່າງເສັ້ນທາງໃນຊົນນະບົດ ຊານເມືອງ ແລະ ຂອບເຂດຕົວເມືອງ ເຊິ່ງທົ່ວ ນວ ມີເສັ້ນທາງຍາວທັງໝົດ 2.701,9 ກິໂລແມັດ ໃນນີ້ເສັ້ນທາງປູເບຕົງ 323,7 ກິໂລແມັດ, ປູອັດສະຟານ 167,4 ກິໂລແມັດ, ທາງປູຢາງ 2 ຊັ້ນ 596,2 ກິໂລແມັດ, ທາງປູແຮ່ 1.235,9 ກິໂລແມັດ, ທາງທໍາມະຊາດ 378,5 ກິໂລແມັດ.

ຍ້ອນທີ່ຕັ້ງ ແລະ ຈຸດພິເສດທີ່ແຕກຕ່າງພະແນກ ຍທຂ ຈຶ່ງຖືສໍາຄັນຕໍ່ວຽກງານສ້ອມແປງ ແລະ ປົກປັກຮັກສາເສັ້ນທາງ ຮ່ອງລະບາຍນໍ້າໃຫ້ສາມາດຮັບໃຊ້ໃຫ້ແກ່ການສັນຈອນເພື່ອໃຫ້ຄວາມສະດວກສະບາຍ ສະເພາະປີ 2018 ນວ ເກີດມີຝົນຕົກຕໍ່ເນື່ອງຫຼາຍວັນມັນໄດ້ສົ່ງຜົນກະທົບຕໍ່ເສັ້ນທາງປູ່ ນວ ຫຼາຍເສັ້ນ ນັບທັງເສັ້ນທາງທີ່ໄດ້ກໍ່ສ້າງຜ່ານມາ ແລະ ກໍາລັງກໍ່ສ້າງ ບາງຊ່ວງເກີດມີການເປ່ເພຈໍາເປັນຕ້ອງໄດ້ຂຶ້ນແຜນສ້ອມແປງ ແລະ ແຜນງົບປະມານທີ່ພະແນກ ຍທຂ ໄດ້ຮັບປະຈໍາປີເພື່ອຊໍາລະໃຫ້ແກ່ວຽກງານກໍ່ສ້າງເສັ້ນທາງເບຕົງ, ທາງປູຢາງ ແລະ ວຽກສ້ອມແປງທາງປູຢາງ, ທາງດິນແດງ

ມີຈຳກັດບໍ່ສົມຄູ່ກັບຄວາມຕ້ອງການ ສະແດງໃຫ້ເຫັນປີ 2017 ໄດ້ຮັບງົບປະມານ 1.260 ລ້ານກີບ ປີ 2018 ໄດ້ຮັບ 818 ລ້ານກີບ ສິ່ງດັ່ງກ່າວໄດ້ກະທົບໂດຍກົງຕໍ່ການສ້ອມແປງພື້ນຖານໂຄງລ່າງເສັ້ນທາງ ແລະ ຮ່ອງລະບາຍນ້ຳ, ພ້ອມນັ້ນສາເຫດເຮັດໃຫ້ເສັ້ນທາງເປ່ເພຍ້ອນເສັ້ນທາງຫຼາຍເສັ້ນໃນຕົວເມືອງເປັນທາງປູຢາງ 2 ຊັ້ນທີ່ໄດ້ຮັບການກໍ່ສ້າງມາຫຼາຍປີ ປັດຈຸບັນໜ້າທາງແຕກແຫງ ເປັນຂຸມ ໝົດອາຍຸການນຳໃຊ້ ແຕ່ພັດບໍ່ໄດ້ຮັບການຍົກລະດັບຟື້ນຟູ ເນື່ອງຈາກວ່າບໍ່ມີງົບປະມານພຽງພໍ.

ໄລຍະຜ່ານມາກໍ່ຄືປັດຈຸບັນພະແນກ ຍທຂ ໄດ້ເອົາໃຈໃສ່ໃນຕິດຕາມກວດກາເສັ້ນທາງເປັນປົກກະຕິ ຖ້າໜ້າທາງເປ່ເພເປັນຂຸມ ເປັນບວກກໍ່ໄດ້ໃຫ້ໜ່ວຍງານປົກປັກຮັກສາເສັ້ນທາງຮີບຮ້ອນໄປແກ້ໄຂທັນທີ ຕົ້ນຕໍເລັ່ງໃສ່ເສັ້ນທາງສາຍຫຼັກໃນຂອບເຂດ 5 ຕົວເມືອງໃນ ເຊັ່ນ: ເສັ້ນທາງແຕ່ໄຟແດງສີບຸນເຮືອງຫາຄ້ອຍໄຟຟ້າໂພນຕ້ອງ, ເສັ້ນທາງຕະຫຼາດແລງໜອງດ້ວງ-ໜອງບົວທອງ-ໄຟແດງດົງປາແຫຼບ, ເສັ້ນທາງນາຄວາຍ-ໄຟແດງຫຼັກ 21 (ທາງ 13 ໃຕ້), ທາງຄຸ້ມສີສະຫວາດທົ່ງສ້າງນາງ-ສີ່ແຍກຊ້າງເຜືອກ ແລະ ເສັ້ນທາງອື່ນໆ ນອກຈາກໄດ້ຮັບງົບປະມານສ້ອມແປງປະຈຳປີ 2018 ທີ່ ນວ ຈັດສັນໃຫ້ແລ້ວຍັງໄດ້ຮັບງົບປະມານສ້ອມແປງຈາກກອງທຶນທາງທີ່ກະຊວງ ຍທຂ ຈັດສັນໃຫ້ຈຳນວນ 7 ຕື້ກວ່າກີບ ເພື່ອນຳໃຊ້ເຂົ້າໃນການສ້ອມແປງທາງເປັນຕົ້ນເສັ້ນທາງແຕ່ບ້ານທ່າສະຫວ່າງ-ເວີນຄຳ-ໂຮງຮຽນຕຳຫຼວດເວີນຄຳ, ທາງສະໜາມກິລາຫຼັກ 16-ທາງ 450 ປີ ທາງຫໍພັກຊີເກມ-ບ້ານນາທົ່ມ ແລະ ບັນດາເສັ້ນທາງອື່ນໆທີ່ໄດ້ມອບໃຫ້ຫ້ອງການ ຍທຂ ເມືອງເປັນຜູ້ຂຶ້ນແຜນຈັດຕັ້ງປະຕິບັດສ້ອມແປງທາງດິນແດງ ແລະ ທາງປູຢາງ 2 ຊັ້ນ.

ສຳລັບເສັ້ນທາງທີ່ກໍ່ສ້າງຕາມຝັ່ງເມືອງເຊັ່ນ: ເສັ້ນທາງ T6 ແຕ່ບ້ານພະຂາວຖະໜົນໄກສອນ ໂຮງແຮມຄອນປະສິງ-ບ້ານໜອງພະຍາໂຮງໝໍແມ່ ແລະ ເດັກ ທີ່ການກໍ່ສ້າງຊັກຊ້າແກ່ຍາວບໍ່ໄປຕາມສັນຍາທີ່ກຳນົດໄວ້ຍ້ອນຜູ້ຮັບເໝົາຂາດທຶນໝູນວຽນ ແຕ່ຍ້ອນເຫັນໄດ້ຄວາມສຳຄັນຂອງເສັ້ນທາງດັ່ງກ່າວທາງຂັ້ນເທິງຈຶ່ງໄດ້ຊີ້ນຳຢ່າງໃກ້ສິດລະດົມຊຸກຍູ້ໃຫ້ບໍລິສັດຮີບຮ້ອນສ້ອມແປງ ແລະ ກໍ່ສ້າງເພື່ອໃຫ້ໂຄງການສຳເລັດ ຖ້າຫາກບໍ່ປະຕິບັດສຳເລັດໃນທ້າຍປີ 2018 ນີ້ຈະໄດ້ຄົ້ນຄວ້າຍົກເລີກສັນຍາ ເພື່ອຊອກຫາບໍລິສັດທີ່ມີເງື່ອນໄຂມາສືບຕໍ່ກໍ່ສ້າງ; ປັດຈຸບັນບໍລິສັດຮັບເໝົາໄດ້ມີການສ້ອມແປງຖົມຂຸມໃຫຍ່ ເກດໜ້າທາງໃຫ້ສາມາດໄປມາໄດ້ສະດວກ, ສ່ວນເສັ້ນທາງຕາມນິໄຊທາສີເກີດທີ່ກຳລັງກໍ່ສ້າງໜ້າທາງບາງຊ່ວງເປັນບວກເປັນຂຸມການໄປມາພົບຄວາມຫຍຸ້ງຍາກ ພະແນກ ຍທຂ ໄດ້ຊີ້ນຳໃຫ້ຜູ້ຮັບເໝົາສ້ອມແປງປົກກະຕິ ແຕ່ຍ້ອນສະພາບຝົນຕົກໜັກຕິດຕໍ່ກັນຫຼາຍວັນຈຶ່ງມີການເປ່ເພຄືນ, ຖ້າສະພາບດິນຟ້າເອື້ອອຳນວຍແລ້ວຈະເລັ່ງໃຫ້ບໍລິສັດຮັບເໝົາສ້ອມແປງຄືນໂດຍໄວເພື່ອໃຫ້ສະດວກຕໍ່ການສັນຈອນໄປມາຍິ່ງໆຂຶ້ນ.

2. <u>ປະຊາຊົນບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີໃຫ້ລັດຖະບານແກ້ໄຂບັນຫາຂອງພະນັກງານ, ຊື່ ທ້າວ ແສງຈັນ ພອນມະນີ ທີ່ສັງກັດຢູ່ກອງຄຸ້ມຄອງພາຫະນະການຂົນຂົ່, ກະຊວງໂຍທາທິການ ແລະ ຂົນສົ່ງ ສວຍໃຊ້ໜ້າທີ່ຕຳແໜ່ງໄປໃນທາງທີ່ບໍ່ຖືກຕ້ອງ ເພື່ອອອກໃບທະບຽນນຳໃຊ້ພາຫະນະປອມໃຫ້ກັບປະຊາຊົນ ແຕ່ປີ 2008-2016 ໂດຍທີ່ປະຊາຊົນບໍ່ຮູ້ວ່າລົດຄັນດັ່ງກ່າວທີ່ຊື້ມານັ້ນ ແມ່ນລົດຍັງບໍ່ທັນໄດ້ເສຍພາສີອາກອນເທື່ອ, ແຕ່ພະນັກງານຜູ້ຮັບຜິດຊອບວຽກດັ່ງກ່າວກໍ່ໄດ້ຢັ້ງຢືນວ່າ: ລົດຄັນດັ່ງກ່າວແມ່ນຖືກຕ້ອງຕາມກົດໝາຍ, ລະບຽບການ. ແຕ່ມາຮອດປີ 2016 ລົດຄັນດັ່ງກ່າວ ກໍ່ຖືກເຈົ້າໜ້າທີ່ເຂດ 5 ຍຶດໄວ້ເພື່ອໃຫ້ປະຊາຊົນໄປເສຍພາສີໃຫ້ຖືກຕ້ອງ ແຕ່ຜູ້ກ່ຽວບໍ່ຍອມເສຍພາສີ ແລະຢາກໃຫ້ພະນັກງານຜູ້ຢັ້ງຢືນນັ້ນອອກມາຮັບຜິດຊອບຕໍ່ກັບບັນຫາດັ່ງກ່າວ. ດັ່ງນັ້ນ, ຈຶ່ງຂໍໃຫ້ລັດຖະບານກວດກາຄືນເພື່ອໃຫ້ຄວາມເປັນທຳກັບປະຊາຊົນດ້ວຍ.</u>

- <u>ຕອບ:</u> ກະຊວງ ໂຍທາທິການ ແລະ ຂົນສົ່ງ ໄດ້ມອບໃຫ້ກົມຂົນສົ່ງ ສົມທົບກັບ ກົມກວດກາ ແລະ ພະແນກ ຍທຂ ນະຄອນຫລວງວຽງຈັນ ດຳເນີນການກວດກາຕາມການສະເໜີຂອງປະຊາຊົນ (ຕາມແຈ້ງການສະບັບເລກທີ 20329/ຫກ.ສລພ, ລົງວັນທີ 05/09/2018) ແລະ ປະຈຸບັນສືບຕໍ່ດຳເນີນການກວດກາເອົາຂໍ້ມູນໃຫ້ລະອຽດຈະແຈ້ງຕາມຄວາມເປັນຈິງເພື່ອລາຍງານຄະນະນຳກະຊວງ ພາຍຫລັງສຳເລັດຈະໄດ້ສະຫລຸບສັງລວມລາຍງານ ໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຊາບໃນເວລາອັນຄວນ.

3. <u>ຜູ້ປະກອບການທຸລະກິດແລ່ນລົດເມ, ແຂວງຈຳປາສັກ ສະເໜີເພີ່ມຖ້ຽວແລ່ນລົດເມຕື່ມອີກ ເພາະວ່າຜ່ານມາເຫັນວ່າ ມີໜ້ອຍຫຼາຍ ແລະ ໄດ້ສະເໜີບັນຫາດັ່ງກ່າວໄປຫາ ພະແນກໂຍທາທິການ ແລະ ຂົນສົ່ງ, ແຂວງຈຳປາສັກແລ້ວ ແຕ່ບໍ່ໄດ້ຮັບການແກ້ໄຂ. ດັ່ງນັ້ນ, ຈຶ່ງຂໍໃຫ້ລັດຖະບານຊ່ວຍແກ້ໄຂດ້ວຍ.</u>

- <u>ຕອບ:</u> ກ່ຽວກັບການສະເໜີຂໍເພີ່ມຖ້ຽວ ແລ່ນລົດເມແຂວງຈຳປາສັກຕື່ມອີກນັ້ນ, ກະຊວງ ຍທຂ ເຫັນວ່າ: ສາຍທາງ ປາກເຊ, ແຂວງຈຳປາສັກ ຫາ ນະຄອນຫຼວງວຽງຈັນ ແຕ່ລະມື້ມີລົດເມໂດຍສານ ແລ່ນອອກສະຖານີໂດຍສານສາຍໃຕ້ ນະຄອນຫຼວງວຽງຈັນ ໄປ ນະຄອນປາກເຊ, ແຂວງຈຳປາສັກ ເລີ້ມແຕ່ເວລາ 7:15 ໂມງເຊົ້າ ຮອດເວລາ 21:00ໂມງແລງ , ໄລຍະເວລາປ່ອຍລົດອອກສະຖານີຫ່າງກັນບໍ່ເກີນ 30 ນາທີ/ຖ້ຽວ, ຊຶ່ງມີລົດໂດຍສານຈຳນວນ 20 ຄັນ ຂອງ 9 ບໍລິສັດ ແລ່ນສວນທາງກັນແຕ່ລະມື້. ສະນັ້ນ, ຈຶ່ງເຫັນວ່າໃນປະຈຸບັນຖຽ້ວລົດດັ່ງກ່າວພຽງພໍກັບຄວາມຕ້ອງການຂອງ ປະຊາຊົນທີ່ເດີນທາງໄປ-ມາຕາມສາຍທາງດັ່ງກ່າວແລ້ວ. ສ່ວນສາຍທາງອື່ນ ກົມຂົນສົ່ງ, ກະຊວງ ຍທຂ ໄດ້ສົມທົບກັບ ພະແນກ ຍທຂ ແຂວງຈຳປາສັກ ກວດກາແລ້ວ ບໍ່ສາມາດຮູ້ໄດ້ວ່າຜູ້ປະກອບການທຸລະກິດລົດເມ ຂໍເພີ່ມຖ້ຽວລົດໃນສາຍທາງໃດ ເພາະບໍ່ມີການສະເໜີເປັນລາຍລັກອັກສອນ.

ຕໍ່ບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ແຂວງຈຳປາສັກ ຕິດຕາມກວດກາການປະຕິບັດວຽກງານບໍລິການຂົນສົ່ງຢ່າງເຂັ້ມງວດ ແລະ ປະຕິບັດໃຫ້ດີເພື່ອບໍລິການຮັບໃຊ້ ປະຊາຊົນ ແລະ ຮັບປະກັນຄວາມປອດໄພໃນການຄົມມະນາຄົມຂົນສົ່ງ.

4. <u>ພະນັກງານ, ແຂວງອຸດົມໄຊ ສະເໜີໃຫ້ລັດຖະບານຮັບຮູ້ກ່ຽວກັບບັນຫາ ການແລ່ນລົດເມຢູ່ແຂວງອຸດົມໄຊ, ເຊິ່ງເປັນລົດເມຂອງຄົນເຊື້ອຊາດຫວຽດນາມ ທີ່ບໍ່ປະຕິບັດຕາມລະບຽບ ແລະ ຂໍ້ກຳນົດ ໂດຍບໍ່ເຂົ້າຄິວ ຄືລົດເມທົ່ວໄປ ແລະ ບໍ່ມີຜູ້ໂດຍສານ; ມື້ໜຶ່ງແລ່ນລົດເຂົ້າ-ອອກ ພາຍໃນແຂວງ ປະມານ 2-3ຖ້ຽວ; ສັງເກດເຫັນວ່າມີລັກສະນະດັດແປງສະພາບລົດ ເປັນຕົ້ນ ຍົກພື້ນລົດຂຶ້ນ, ສັບປ່ຽນປ້າຍລົດ; ຜ່ານມາເຈົ້າໜ້າທີ່ໄດ້ກວດກາ ແລະ ພົບເຫັນການຊຸກເຊື່ອງໄມ້ຫຼາຍຄັ້ງ ສະເໜີຫາພາກສ່ວນຂະແໜງໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງປ້ອງກັນຄວາມສະຫງົບ ແກ້ໄຂ ແຕ່ກໍ່ບໍ່ໄດ້ຮັບການແກ້ໄຂເທື່ອ, ສະນັ້ນ, ຈຶ່ງຂໍສະເໜີໃຫ້ແຕ່ງຕັ້ງຄະນະກຳມະການສະເພາະກິດ ລົງຕິດຕາມກວດກາພື້ນທີ່ຕົວຈິງ ວ່າມີການຊຸກເຊື່ອງໄມ້ ເພື່ອຂົນສົ່ງອອກນອກປະເທດ ແທ້ບໍ່, ຖ້າມີມູນຄວາມຈິງແທ້ ຂໍໃຫ້ລັດຖະບານພິຈາລະນາແກ້ໄຂດ່ວນ.</u>

- <u>ຕອບ:</u> ກ່ຽວກັບການແລ່ນລົດຂົນສົ່ງໂດຍສານຢູ່ແຂວງອຸດົມໄຊ ຊຶ່ງລົດເມຂອງຄົນເຊື້ອຊາດຫວຽດນາມບໍ່ປະຕິບັດຕາມຂໍ້ກຳນົດລະບຽບນັ້ນ, ກົມຂົນສົ່ງ ໄດ້ປະສານກັບພະແນກ ຍທຂ ແຂວງອຸດົມໄຊ ແລະ ພະແນກ ຍທຂ ໄດ້ລາຍງານວ່າ: ໃນໄລຍະປີຜ່ານມາ ໄດ້ສົມທົບກັບພະແນກກະສິກຳ-ປ່າໄມ້ແຂວງ ແຕ່ງຕັ້ງຄະນະກວດກາລົດໂດຍສານ ທີ່ເຮັດຜິດລະບຽບ ທີ່ມີການດັດແປງເຕັກນິກລົດລັກລອບຂົນສົ່ງໄມ້ອອກນອກປະເທດ, ຜ່ານການກວດກາໄດ້ພົບເຫັນລົດຂອງບໍລິສັດ ສຸລິວັນ ຂົນສົ່ງໂດຍສານ ທີ່ແລ່ນສາຍທາງອຸດົມໄຊ-ເຫງະອານ, ຕໍ່ບັນຫາດັ່ງກ່າວ ພະແນກ ຍທຂ ແຂວງອຸດົມໄຊໄດ້ແກ້ໄຂໄປແລ້ວ ໂດຍໃຫ້ບໍລິສັດ ປະຕິບັດການຂົນສົ່ງໃຫ້ຖືກຕ້ອງສອດຄ່ອງຕາມລະບຽບການ (ມີປຶດບັນທຶກການແກ້ໄຂແຕ່ປີ 2/11/2016), ປະຈຸບັນພະແນກ ຍທຂ ແຂວງ ແຂວງອຸດົມໄຊ ໄດ້ແຕ່ງຕັ້ງພະນັກງານຂະແໜງຄຸ້ມຄອງການຂົນສົ່ງ ລົງຕິດຕາມກວດກາ ແລະ ໄປປະຈຳຢູ່ສະຖານີໂດຍສານຂອງແຂວງ, ເຫັນວ່າບໍ່ພົບເຫັນລົດໂດຍສານລະຫວ່າງປະເທດເຮັດຜິດລະບຽບການ, ຖ້າພົບເຫັນ ມີການຝ່າຝືນຜິດລະບຽບການກ່ຽວຂ້ອງ ທາງພະແນກ ແຂວງອຸດົມໄຊ ກໍ່ມີມາດຕະການແກ້ໄຂຢູ່ແລ້ວ.

ຕໍ່ບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ແຂວງ ອຸດົມໄຊຕິດຕາມ, ກວດກາການດຳເນີນການຂົນສົ່ງຂອງຜູ້ປະກອບການຕາມລະບຽບການ ແລະ ກົດໝາຍກ່ຽວຂ້ອງເຂັ້ມງວດ ເພື່ອຮັບປະກັນຄວາມປອດໄພໃນການຄົມມະນາຄົມຂົນສົ່ງ, ປົກປ້ອງຜົນປະໂຫຍດຂອງປະຊາຊົນ, ຂອງປະເທດຊາດ ແລະ ຂອງຜູ້ປະກອບການດຳເນີນທຸລະກິດດັ່ງກ່າວ.

5. <u>ປະຊາຊົນບ້ານດອນຕິ້ວ ແລະ ບ້ານທ່າງ່ອນ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໄດ້ຮັບຜົນກະທົບຈາກຮ່ອງລະບາຍນ້ຳ ໃນໂຄງການຕ້ານແລ້ງ-ຕ້ານຖ້ວມ ເຮັດໃຫ້ການສັນຈອນໄປມາພົບຄວາມຫຍຸ້ງຍາກຫຼາຍ.</u>

<u>ຕອບ</u>: ໂຄງການໂຄງການຕ້ານແລ້ງ-ຕ້ານຖ້ວມ ດັ່ງກ່າວແມ່ນນອນໃນຄວາມຮັບຜິດຊອບຂອງກະຊວງກະສິກຳ ແລະ ປ່າໄມ້. ຕໍ່ບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ນະຄອນຫລວງ ສົມທົບກັບຫ້ອງການ ຍທຂ ເມືອງໄຊທານີ ກວດກາເບິ່ງສະພາບຕົວຈິງ ແລະ ສົມທົບກັບພາກສ່ວນ

ກ່ຽວຂ້ອງປຶກສາຫາລືແກ້ໄຂ ເພື່ອເຮັດໃຫ້ການເດີນທາງໄປ-ມາຂອງປະຊາຊົນດີຂຶ້ນ ແລະ ຮັບປະກັນຄວາມປອດໄພໃນການສັນຈອນໃນເຂດດັ່ງກ່າວ.

6. <u>ປະຊາຊົນ, ບ້ານນາໂພໃຕ້, ເມືອງໂພນໂຮງ, ແຂວງວຽງຈັນ ໄດ້ສະເໜີໃຫ້ລັດຖະບານຮັບຮູ້ວ່າກ່ຽວກັບບັນຫາຫົນທາງເປ່ເພຫາຍ ໂດຍສະເພາະໃນເຂດບ້ານນາໂພໃຕ້ ເຊິ່ງປະຊາຊົນໄດ້ຮັບຄວາມຫຍຸ້ງຍາກໃນການສັນຈອນໄປ-ມາ.</u>

➢ <u>ຕອບ:</u> ອີງຕາມການລາຍງານຂອງຂອງພະແນກ ຍທຂ ແຂວງວຽງຈັນ ໃຫ້ຊາບວ່າ: ໂຄງການກໍ່ສ້າງເສັ້ນທາງນາໂພ-ປາກແຈ້ງ ແມ່ນເສັ້ນທາງຫຼວງແຂວງ ເຂົ້າຫາເທດສະບານແຂວງ ຜ່ານຫຼາຍບ້ານທີ່ມີຊຸມຊົນອາໄສລຽບຕາມແຄມທາງໜາແໜ້ນ ໂຄງການນີ້ແມ່ນໂຄງການການລົງທຶນກ່ອນຂອງແຂວງ ໂດຍແມ່ນບໍລິສັດດາລາວັນການຄ້າ ເປັນຜູ້ຮັບເໝົາກໍ່ສ້າງ, ເສັ້ນທາງມີລວງຍາວ 11,8 ກມ, ເປັນທາງປູດ້ວຍເບຕົງເສີມເຫຼັກ ແລະ ໄດ້ລົງມືຈັດຕັ້ງປະຕິບັດໂຄງການ ແຕ່ວັນທີ 7/1/2013 ຕາມສັນຍາມີໄລຍະເວລາການກໍ່ສ້າງ 2 ປີ ແຕ່ເນື່ອງຈາກວ່າບໍລິສັດຂາດທຶນໝູນວຽນ ຈຶ່ງບໍ່ສາມາດສຳເລັດຕາມແຜນການ, ມາຮອດວັນທີ 20/10/2016 ໄດ້ມີຂໍ້ຕົກລົງຂອງທ່ານເຈົ້າແຂວງວຽງຈັນ ສັ່ງໂຈະໂຄງການດັ່ງກ່າວ ເຊິ່ງວຽກດັ່ງກ່າວປະຕິບັດໄດ້ພຽງແຕ່ 12,38% ເທົ່ານັ້ນ, ໃນປີ 2017 ແຂວງວຽງຈັນ ໄດ້ນຳໃຊ້ງົບປະມານຂອງແຂວງໃນການສ້ອມແປງໜ້າທາງດິນແດງ ເພື່ອແກ້ໄຂການສັນຈອນໃຫ້ໄປມາສະດວກ. ສະພາບເສັ້ນທາງດັ່ງກ່າວເປ່ເພເສຍຫາຍ , ເຮັດໃຫ້ການໄປມາລຳບາກ ຍ້ອນການຂົນສົ່ງຫີນ-ຊາຍເຂົ້າໄປໃນໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ເພື່ອແກ້ໄຂຕໍ່ບັນຫາດັ່ງກ່າວ ໃນສະເພາະໜ້າພາຍຫຼັງລະດູຝົນປີ 2018 ນີ້ ຈະຂໍອະນຸມັດສ້ອມແປງເພື່ອແກ້ໄຂໃຫ້ປະຊາຊົນທຽວໄດ້ສະດວກກ່ອນ, ເນື່ອງຈາກວ່າໂຄງການດັ່ງກ່າວນີ້ ບັນຈຸຢູ່ໃນແຜນການລົງທຶນຂອງແຂວງ ແລະຜ່ານສະພາແຫ່ງຊາດໄດ້ຮັບຮອງແລ້ວ. ຕາມທັດສະນະຂອງພະແນກ ຍທຂ ກໍ່ຄືການນຳຂອງແຂວງ ສະເໜີດັດແກ້ແບບກໍ່ສ້າງຈາກທາງເບຕົງມາເປັນທາງປູຢາງ 2 ຊັ້ນ ແລະ ຫຼຸດຜ່ອນຄວາມກວ້າງມາເປັນ 7 m ( ບໍ່ມີທາງຄົນຍ່າງ ແລະ ຮ່ອງລະບາຍນ້ຳຂ້າງທາງ).

ຕໍ່ບັນຫາດັ່ງກ່າວ, ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ແຂວງວຽງຈັນ ສົມທົບກັບຫ້ອງການ ຍທຂ ເມືອງ ໂພນໂຮງ ສົມທົບກັບພາກສ່ວນກ່ຽວຂ້ອງປຶກສາຫາລືແກ້ໄຂ ເພື່ອເຮັດໃຫ້ການເດີນທາງໄປ-ມາຂອງປະຊາຊົນດີຂຶ້ນ ແລະ ຮັບປະກັນຄວາມປອດໄພດ້ານການຄົມມະນາຄົມຂົນສົ່ງໃນບໍລິເວນດັ່ງກ່າວ ແລະ ຈັດຕັ້ງປະຕິບັດແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ: 1376/ຫສນຍ.ກລຂ, ລົງວັນທີ 21/8/2108 ຢ່າງເຂັ້ມງວດ.

7. <u>ປະຊາຊົນ, ແຂວງອັດຕະປື ໄດ້ສະເໜີໃຫ້ລັດຖະບານຮັບຮູ້ບັນຫາກ່ຽວກັບ ການຮັບເໝົາກໍ່ສ້າງ ເພື່ອຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະຊ່ວງໄລຍະແກ້ໄຂໄພພິບັດນ້ຳຖ້ວມ, ເມືອງສະໜາມໄຊ, ແຂວງອັດຕະປື ບາງບໍລິສັດໄດ້ຮັບເໝົາກໍ່ສ້າງຫຼາຍໂຄງການ, ບາງບໍລິສັດ ກໍ່ບໍ່ໄດ້ຈັກໂຄງການ ເອົາແຕ່ໃຜສາມາດແລ່ນເອກະສານຮັບເໝົາໂຄງການໄດ້ , ໃນນີ້, ຄວນແບ່ງໃຫ້ບໍລິມະສິດພາຍໃນແຂວງ ເພື່ອມີລາຍຮັບງົບປະມານສ່ວນດັ່ງກ່າວຕື່ມ ເນື່ອງຈາກໄລຍະຜ່ານມາບໍລິສັດ ກໍ່ໄດ້ປະຕິບັດເສຍພັນທະອາກອນ ໃຫ້ລັດຄົບຕາມຈຳນວນ ແຕ່ພັດເວລາມີໂຄງການພັດບໍ່ໄດ້ຮັບເຮັດ.</u>

➢ <u>ຕອບ:</u> ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງອັດຕະປື ລາຍງານຊາບວ່າ: ກ່ຽວກັບການຮັບເໝົາກໍ່ສ້າງ ເພື່ອຟື້ນຟູຊີວິດການເປັນຢູ່ ຂອງປະຊາຊົນ ໂດຍສະເພາະແມ່ນຊ່ວງໄລຍະແກ້ໄຂໄພພິບັດນ້ຳຖ້ວມ ເມືອງສະໜາມໄຊ, ແຂວງອັດຕະປື ນັ້ນ, ສຳລັບໂຄງການສຸກເສີນ ທີ່ພະແນກ ຍທຂ ແຂວງ ຮັບຜິດຊອບ ມີດັ່ງນີ້:

1. ໂຄງການສ້ອມແປງສຸກເສີນທາງ 18A ແຕ່ເທດສະບານແຂວງ ຫາ ບ້ານໃໝ່ ມູນຄ່າ 5.207.675.340 ກີບ ໄດ້ມອບໃຫ້ 4 ບໍລິສັດເປັນຜູ້ຮັບເໝົາຄື: ບໍລິສັດ ໄຊເສດຖາ ມູນຄ່າ 1.682.339.400 ກີບ, ບໍລິສັດ ລາດສະວົງ ມູນຄ່າ 1.104.915.240 ກີບ, ບໍລິສັດ ເຮືອງມີໄຊ ມູນຄ່າ 1.019.849.400 ກີບ ແລະ ບໍລິສັດ ສີງລາດສົມບູນ ມູນຄ່າ 1.400.571.300 ກີບ.
2. ກໍ່ສ້າງຂົວເບເລ 4 ແຫ່ງ ຕາມເສັ້ນທາງຫຼວງແຫ່ງຊາດເລກທີ 18A ມີ: ຂົວຫ້ວຍພອກ, ຂົວຫ້ວຍອຸກ,ຂົວຫ້ວຍເດື່ອ, ຂົວເຊປຽນ ມູນຄ່າ 24.872.650.000 ກີບ ມອບໃຫ້ ບໍລິສັດ ລັດວິສາຫະກິດກໍ່ສ້າງຄົມມະນາຄົມເປັນຜູ້ຮັບເໝົາ.
3. ໂຄງການກໍ່ສ້າງຂົວ 4 ແຫ່ງ ຕາມເສັ້ນທາງຫຼວງແຫ່ງຊາດ ເລກທີ 18A ມີ: ຂົວຫ້ວຍເບບນ້ອຍ, ຂົວຫ້ວຍກັນຈານ, ຂົວຫ້ວຍແຄນ ແລະ ຂົວຫ້ວຍປີນ ແມ່ນບໍລິສັດກໍ່ສ້າງທາງລົດໄຟລາວ-ຈີນ ໃຫ້ເງິນຊ່ວຍເຫຼືອລ້າ ແລະ ເປັນຜູ້ກໍ່ສ້າງເອງ.

4. ໂຄງການກໍ່ສ້າງຂົວ 4 ແຫ່ງ ຕາມເສັ້ນທາງຫຼວງແຫ່ງຊາດ ເລກທີ 18A ມີ: ຂົວຫ້ວຍໃຜ່, ຂົວຫ້ວຍກາເສນ, ຂົວຫ້ວຍລາງ, ຂົວຫ້ວຍດັກດ່ານ ມູນຄ່າ 7,6 ຕື້ກີບ ມອບໃຫ້ບໍລິສັດໄຊເສດຖາ ເປັນຜູ້ຮັບເໝົາ.
5. ສ້ອມແປງສຸກເສີນເສັ້ນທາງຫຼວງທ້ອງຖິ່ນ ເລກທີ 9004 ແລະ 9041 ມູນຄ່າ 3,2 ຕື້ກີບ ມອບໃຫ້ບໍລິສັດພະເນືອງ ມູນຄ່າ 1.219.528.108, ບໍລິສັດ ໄຊອັດຕະປື ມູນຄ່າ 982.738.544 ກີບ ບໍລິສັດ ບໍ່ສາຍຄໍາ 998,052,317 ກີບ.
6. ວຽກບຸກເບີກທີ່ພັກຊົ່ວຄາວ ແລະ ຖາວອນ ຈໍານວນ 300,8 ຮຕ ມູນຄ່າ 8,29 ຕື້ກີບ ມອບໃຫ້ ບໍລິສັດ ພະເນືອງ ມູນຄ່າ 1.705.702.680 ກີບ, ບໍລິສັດເຮືອງມີໄຊ ມູນຄ່າ 1.591.038.900 ກີບ, ບໍລິສັດ ດວງດີ ພັດທະນາ ມູນຄ່າ 1.387.214.136 ກີບ, ບໍລິສັດ ບຸນຖາວອນຊັບ ມູນຄ່າ 1.909.974.330ກີບ ແລະ ບໍລິສັດ ສຸກປະສິງ ມູນຄ່າ 1.705.702.680 ກີບ ເປັນຜູ້ຮັບເໝົາ.
7. ວຽກສໍາຫຼວດ-ອອກແບບ ແຜນຜັງຕາຜ້າ, ອາຄານ, ຕາໜ່າງເສັ້ນທາງ 4 ຈຸດ ມູນຄ່າ 1 ຕື້ກີບ ມອບໃຫ້ ບໍລິສັດ ເອັສຕຣາ ເປັນຜູ້ຮັບເໝົາ ສໍາຫຼວດ-ອອກແບບ.

ການແບ່ງໂຄງການ ໃຫ້ບໍລິສັດ ແມ່ນເປັນເອກະພາບ ຈາກຄະນະຟື້ນຟູ ພື້ນຖານໂຄງລ່າງ ແລະ ຈັດສັນອາຊີບ ໂດຍແມ່ນທ່ານຮອງເຈົ້າແຂວງຜູ້ຊີ້ນໍາວຽກງານເສດຖະກິດເປັນຫົວໜ້າຄະນະ ຕາມມະຕິຕົກລົງຂອງຄະນະປະຈໍາພັກແຂວງ ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຟື້ນຟູ ແລະ ແກ້ໄຂຜົນກະທົບຈາກໄພນໍ້າຖ້ວມ ຈາກໂຄງການກໍ່ສ້າງເຂື່ອນໄຟຟ້າເຊປຽນ-ເຊນໍ້ານ້ອຍ ຢູ່ເມືອງສະໜາມໄຊ ແຂວງອັດຕະປື ສະບັບເລກທີ 205/ຄປພຂ ລົງວັນທີ 6 ສິງຫາ 2018 ແລ້ວສະເໜີທ່ານ ເຈົ້າແຂວງເພື່ອອະນຸມັດໂຄງການຕ່າງໆ. ບໍລິສັດຮັບເໝົາສ່ວນຫຼາຍແມ່ນບໍລິສັດພາຍໃນແຂວງ, ສ່ວນບໍລິສັດມາຈາກຕ່າງແຂວງມີ 1 ບໍລິສັດຄື: ບໍລິສັດລັດວິດສາຫະກິດ ກໍ່ສ້າງຄົມມະນາຄົມ, ການມອບວຽກໃຫ້ບໍລິສັດແມ່ນອີງໃສ່ທ່າແຮງຂອງບໍລິສັດ ເປັນຕົ້ນແມ່ນທາງດ້ານທຶນຮອນ ແລະ ພາຫະນະກົນຈັກທີ່ມີຄວາມພ້ອມເພື່ອແກ້ໄຂວຽກງານໃຫ້ທັນເວລາ ແລະ ພ້ອມກັນນັ້ນໃຫ້ບໍລິສັດພາຍໃນແຂວງມີວຽກເຮັດງານທໍາ.

ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ສົ່ງພະນັກງານວິຊາການໄປປະຈໍາຢູ່ ອັດຕະປື ແລະ ສົມທົບກັບພະແນກ ຍທຂ ແຂວງອັດຕະປື, ຫ້ອງການ ຍທຂ ເມືອງ ສະໜາມໄຊ ເພື່ອຊ່ວຍໃນການວາງແຜນແກ້ໄຂວຽກສຸກເສີນຕາມການຊີ້ນໍາຂອງຄະນະສະເພາະກິດລະດັບຊາດ, ສ່ວນການມອບວຽກໃຫ້ບໍລິສັດຮັບເໝົາແມ່ນການຕົກລົງຂອງອົງການປົກຄອງແຂວງອັດຕະປື. ສໍາລັບການແກ້ໄຂຜົນກະທົບຈາກໄພພິບັດໄລຍະກາງ (ການຟື້ນຟູ) ແລະ ໄລຍະຍາວ (ການພັດທະນາ) ກະຊວງ ຍທຂ ເຫັນວ່າຄວນໄດ້ຈັດຕັ້ງການປະມູນຈັດ-ຈັດຈ້າງ ຕາມລະບຽບການ ແລະ ກົດໝາຍກ່ຽວຂ້ອງກໍານົດ ເພື່ອໃຫ້ຖືກຕ້ອງຕາມວິໄນແຜນການ ແລະ ວິໄນການເງິນ.

8. <u>ປະຊາຊົນບ້ານ ໜອງປາໃນ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ໄດ້ສະເໜີລັດຖະບານຮັບຮູ້ບັນຫາກ່ຽວກັບການປັບປຸງຮ່ອງລະບາຍນໍ້າທີ່ກວມເອົາ 4 ໝູ່ບ້ານຄື: ບ້ານໜອງປາໃນ, ບ້ານຂຸນຕາທ່າ, ວັດໄຕນ້ອຍທ່າ ແລະ ບ້ານອູບມຸງ. ເຊິ່ງໄດ້ກໍ່ສ້າງໃນປີ 2012 ໂດຍແມ່ນຄວາມຮັບຜິດຊອບຂອງພະແນກໂຍທາທິການ ແລະ ຂົນສົ່ງນະຄອນຫຼວງວຽງຈັນ, ເຫັນວ່າສະພາບການກໍ່ສ້າງຍັງບໍ່ທັນສໍາເລັດ ແລະ ບໍ່ລະອຽດແຕ່ເປັນຫຍັງມີການມອບຮັບໂຄງການແລ້ວ. ສະນັ້ນ, ຈຶ່ງສະເໜີພາກສ່ວນທີ່ກ່ຽວຂ້ອງປັບປຸງຮ່ອງລະບາຍນໍ້າຕື່ມເພື່ອຫຼີກລ້ຽງນໍ້າຖ້ວມໃນລະດູຝົນ ບໍລິເວນດັ່ງກ່າວໃນແຕ່ລະປີ.</u>

➤ <u>ຕອບ:</u> ອີງຕາມການລາຍງານຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ການອອກແບບກໍ່ສ້າງຄູປ້ອງກັນນໍ້າຖ້ວມ (ໂຄງການປ້ອງກັນຕະຝັ່ງເຈື່ອນ ແລະ ພັດທະນາແຄມຂອງ) ໄດ້ດໍາເນີນການສຶກສາລະອຽດຖີ່ຖ້ວນຕໍ່ກັບຜົນກະທົບທີ່ຈະເກີດຂຶ້ນ, ພື້ນທີ່ດິນເຂດນີ້ເປັນພື້ນທີ່ຕໍ່າ ກ່ອນບໍ່ທັນກໍ່ສ້າງຄູກັນນໍ້າ ນໍ້າກໍ່ອັ່ງອໍຢູ່ແລ້ວ ປະຊາຊົນກໍ່ໄດ້ເອົາປໍ້າດູດນໍ້າລົງສູ່ແມ່ນໍ້າຂອງເອົາເອງ. ສະນັ້ນ ຈຶ່ງໄດ້ອອກແບບກໍ່ສ້າງຮ່ອງລະບາຍນໍ້າລຽບຕາມຕີນຄູປ້ອງກັນນໍ້າຖ້ວມ ແລະ ກໍ່ສ້າງຮ່ອງລະບາຍໃຫ້ຍຕັດສັນຄູເປັນຈຸດໆອອກໄປລົງສູ່ແມ່ນໍ້າຂອງ ເພື່ອລະບາຍນໍ້າຝົນອອກຈາກພື້ນທີ່ດັ່ງກ່າວ, ຫຼີກລ້ຽງບໍ່ໃຫ້ເກີດບັນຫາກ່ຽວກັບການລະບາຍນໍ້າພາຍຫຼັງໂຄງການກໍ່ສ້າງສໍາເລັດແລ້ວ. ນັບແຕ່ປີ 2014 ເປັນຕົ້ນມາການລະບາຍນໍ້າເລີ່ມມີບັນຫາ ຍ້ອນຮ່ອງລະບາຍນໍ້າມີສິ່ງອຸດຕັນຄ້າງຄາຢູ່ຕາມຮ່ອງລະບາຍເປັນຈໍານວນຫຼວງຫຼາຍ ເຊັ່ນ: ຂີ້ເຫຍື້ອ, ຕົ້ນໄມ້, ຫຍ້າເກີດຂຶ້ນ

ຕາມພື້ນຮ່ອງເປັນຈຳນວນຫຼວງຫຼາຍ ຈຶ່ງເຮັດໃຫ້ນ້ຳໄຫຼບໍ່ສະດວກ, ນອກຈາກນັ້ນກໍ່ແມ່ນການຖົມດິນເພື່ອປຸກສ້າງອາຄານຕ່າງໆຢູ່ບໍລິເວນນັ້ນເຮັດໃຫ້ດິນໄຫຼໄປຖົມຮ່ອງເຮັດໃຫ້ພື້ນຮ່ອງລະບາຍນ້ຳສູງຂຶ້ນ ຈຶ່ງເຮັດໃຫ້ນ້ຳໄຫຼບໍ່ສະດວກ-ໄຫຼບໍ່ທັນໃນເວລາຝົນຕົກແຮງ.

- <u>ວິທີແກ້ໃນໄລຍະສັ້ນ</u> (ກ່ອນຝົນຈະມາໃນປີ 2019 ນີ້).

ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ ຮ່ວມກັບວິຊາການຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງສີໂຄດຕະບອງ ໄດ້ໄປກວດກາສະຖານທີ່ຕົວຈິງ ແລະ ວັດແທກຈັດລະດັບພື້ນຮ່ອງລະບາຍນ້ຳແຕ່ລະຈຸດແລ້ວ ເຫັນວ່າໄດ້ຕາມລະດັບຄວາມຄ້ອຍຊັນຂອງການໄຫຼຂອງນ້ຳແລ້ວ, ສະເໜີໃຫ້ສະມາຊິກສະພາປະຊາຊົນນະຄອນ

ຫລວງວຽງຈັນຊ່ວຍຊີ້ແຈງ ແລະ ປະສານໃຫ້ອົງການປົກຄອງເມືອງ ແລະ ນາຍບ້ານຈຳນວນ 4 ບ້ານດັ່ງກ່າວເພື່ອລະດົມໃຫ້ປະຊາຊົນໃນເຂດດັ່ງກ່າວເຮັດອານາໄມທຳຄວາມສະອາດ, ຕັດຫຍ້າ, ເກັບຂີ້ເຫຍື້ອ, ຂຸດດິນອອກຈາກຮ່ອງລະບາຍນ້ຳໃຫ້ໝົດ ແລ້ວນ້ຳກໍ່ຈະໄຫຼໄດ້ດີ.

- ສຳລັບອອກອະນຸຍາດການຖົມດິນ, ປຸກສ້າງໃນບໍລິເວນດັ່ງກ່າວ ແມ່ນບໍ່ໃຫ້ອົງການປົກຄອງບ້ານເປັນຜູ້ອະນຸມັດໂດຍພາລະການເພາະມັນຕິດພັນທາງດ້ານເຕັກນິກການລະບາຍນ້ຳ ເພື່ອຫລີກລຽງການລະເມີດຖົມດິນຢ່າງຊະຊາຍເຊິ່ງສາຍເຫດຕົ້ນຕໍເຮັດໃຫ້ນ້ຳຖ້ວມຂັງ, ສະນັ້ນທຸກໆກິດຈະການຖົມດິນ ແລະການປຸກສ້າງຕ່າງໆ ຕ້ອງໄດ້ປະຕິບັດຕາມລະບຽບວ່າດ້ວຍການຄຸ້ມຄອງການປຸກສ້າງທີ່ມີແລ້ວ ໂດຍແມ່ນຫ້ອງການ ຍທຂ ເມືອງ ແລະພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນເປັນຜູ້ອະນຸມັດ ຕາມການແບ່ງຂັ້ນຄຸ້ມຄອງຢ່າງເຂັ້ມງວດ.

- <u>ວິທີແກ້ໃນໄລຍະຍາວ</u> .

ປັດຈຸບັນພະແນກ ຍທຂ (ໂຄງການ) ແມ່ນໄດ້ຮັບເງິນກູ້ຈາກ ສ.ເກົາຫຼີເປັນທີ່ຮຽບຮ້ອຍແລ້ວ ເພື່ອນຳໃຊ້ເຂົ້າໃນການກໍ່ສ້າງ ເສັ້ນທາງເບຕົງໃສ່ສັນຄູກັນນ້ຳເລີ່ມແຕ່ຮ້ານອາຫານມູນດີໄນ ຫາ ບ້ານສີບຸນເຮືອງເຂດໂຮງງານນ້ຳປະປາເກົ້າລ້ຽວ ເສັ້ນທາງດັ່ງກ່າວແມ່ນຈະລວມທັງການກໍ່ສ້າງຮ່ອງລະບາຍນ້ຳ ໃຫ້ເປັນຮ່ອງລະບາຍທີ່ຮັບປະກັນແໜ້ນໜາຖາວອນ, ຄາດຄະເນຈະລົງມືກໍ່ສ້າງໃນທ້າຍປີ 2018.

ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນສົມທົບກັບຫ້ອງການ ຍທຂ ເມືອງ ໃນນະຄອນຫລວງວຽງຈັນເອົາໃຈໃສ່ບັນຫາດັ່ງກ່າວຕາມການສະເໜີ ໃນໄລຍະສັ້ນ ແລະ ໄລຍະຍາວເພື່ອສົມທົບກັບຜູ້ໃຫ້ທຶນດຳເນີນໂຄງການໃຫ້ຖືກມາດຕະຖານເຕັກນິກ, ຮັບປະກັນຄຸນນະພາບ ແລະ ມີປະສິດທິຜົນ ບົນຈິດໃຈເພື່ອຮັບໃຊ້ປະຊາຊົນ.

9. **<u>ປະຊາຊົນບ້ານໜອງປາໃນ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ໄດ້ສະເໜີໃຫ້ລັດຖະບານຮັບຮູ້ບັນຫາກ່ຽວກັບ ການຕັ້ງປ້ຳນ້ຳມັນຢູ່ໃນເຂດດັ່ງກ່າວທີ່ໃກ້ເຮືອນປະຊາຊົນ ແລະ ເປັນເຂດຊຸມຊົນເຊິ່ງເຫັນວ່າມີຄວາມສ່ຽງຕໍ່ຄວາມປອດໄພ ແລະ ບໍ່ເໝາະສົມ.</u>**

➢ <u>ຕອບ:</u> ອີງຕາມການລາຍງານຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໃຫ້ຊາບວ່າ: ກ່ຽວກັບບັນຫາການຮ້ອງຟ້ອງຄັດຄ້ານການປຸກສ້າງປ້ຳນ້ຳມັນຂອງ ບໍລິສັດ ເປໂຕລາວ ຈຳກັດ ຕັ້ງຢູ່ເຂດແຄມຂອງໜ່ວຍ 02, ບ້ານໜອງປາໃນ, ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນນັ້ນ, ຜ່ານການລົງກວດກາຄືນສະຖານທີ່ຕົວຈິງ ແລະ ຄົ້ນຄ້ວາໃສ່ບັນດານິຕິກຳຕ່າງໆ ທີ່ກ່ຽວຂ້ອງ, ລະບຽບຄຸ້ມຄອງຜັງເມືອງຕົວເມືອງວຽງຈັນກໍ່ຄືລະບຽບຄຸ້ມຄອງການປຸກສ້າງ, ລະບຽບຄຸ້ມຄອງປ້ຳນ້ຳມັນເຊື້ອໄຟທີ່ໄດ້ກຳນົດໄວ້ຈຶ່ງຂໍແຈ້ງມາຍັງທ່ານຊາບ ດັ່ງນີ້:

- ສະພາບລວມ: ກ່ອນອອກອະນຸຍາດປຸກສ້າງປໍ້ານໍ້າມັນດັ່ງກ່າວ ໃນຄັ້ງວັນທີ 21/07/2015 ຄະນະວິຊາການຂະແໜງຄຸ້ມຄອງເຄຫາ - ຜັງເມືອງ ແລະ ສິ່ງແວດລ້ອມ, ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ສົມທົບກັບ ບ້ານ ໜອງປາໃນ, ເມືອງສີໂຄດຕະບອງ, ພະແນກຕຳຫຼວດ ສະກັດກັ້ນ ແລະ ຕ້ານອັກຄີໄພນະຄອນຫຼວງວຽງຈັນ ພະແນກ ອຸດສະຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລົງກວດກາສະຖານທີ່ຈຸດທີ່ຕັ້ງຕອນດິນທີ່ສະເໜີປຸກສ້າງຕົວຈິງ ແລະ ໄດ້ຕົກລົງເຫັນດີເປັນເອກະພາບ ໂດຍພື້ນຖານໃຫ້ປຸກສ້າງປໍ້ານໍ້າມັນ (ຕາມບົດບັນທຶກກວດກາຄັ້ງວັນທີ 21/07/2015) ໂດຍປະຕິບັດຕາມກົດລະບຽບວ່າດ້ວຍການກຳນົດເງື່ອນໄຂອະນຸຍາດ ແລະ ມາດຖານເຕັກນິກ ເພື່ອສ້າງຕັ້ງ ແລະ ຄຸ້ມຄອງປໍ້ານໍ້າມັນເຊື້ອໄຟ ສະບັບເລກທີ່ 568/ຄຊປກ, ລົງວັນທີ 04/07/1991 ແລະ ໄດ້ອອກໃບອະນຸຍາດປຸກສ້າງໃຫ້ ເລກທີ 1052/ຍທຂ.ນວ, ລົງວັນທີ 23/03/2016.
- ວິທີແກ້ໄຂ: ຕໍ່ກັບບັນຫາຂໍ້ຂັດແຍ່ງຄັດຄ້ານການສ້າງຕັ້ງປໍ້ານໍ້າມັນດັ່ງກ່າວນີ້ ຈຸດທີ່ຕັ້ງຂອງປໍ້າ ທິດໃຕ້ຕິດກັບຖະໜົນແຄມຂອງ, ທິດເໜືອ ແລະ ທິດຕາເວັນຕົກຕິດກັບເຮືອນປະຊາຊົນ ແລະ ທິດຕາເວັນອອກຕິດກັບທາງຮ່ອມ. ປະຊາຊົນທີ່ບໍ່ພໍໃຈທີ່ສະເໜີຮ້ອງຟ້ອງໄປຫາລັດຖະບານແມ່ນຕອນດິນທີ່ຕິດແປະເບື້ອງທິດເໜືອ (ອາຊີບພະນັກງານບຳນານ) ຜ່ານມາພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ລົງສົມທົບ ແລະ ເປີດກອງປະຊຸມປຶກສາຫາລືຮ່ວມກັບ ປະຊາຊົນທີ່ຢູ່ຂ້າງຄຽງ, ອຳນາດການປົກຄອງບ້ານ, ເມືອງສີໂຄດຕະບອງ ແລະ ພາກສ່ວນທີ່ກ່ຽວຂ້ອງມາແລ້ວຫຼາຍຄັ້ງ ຄື: ວັນທີ 25/09/2015, 17/02/2016, 31/03/2016.

  ຜ່ານລົງກວດກາຄືນຕົວຈິງເຫັນວ່າປະຈຸບັນປໍ້ານໍ້າມັນດັ່ງກ່າວແມ່ນປຸກສ້າງສຳເລັດ ແລະ ເປີດບໍລິການແລ້ວສະເພາະຕອນດິນທີ່ຢູ່ຂ້າງທີ່ມີບັນຫາຂໍ້ຂັດແຍ່ງ ແມ່ນຕິດກັບຫ້ອງການ ແລະ ຖັງນໍ້າມັນໃຕ້ດິນ ມີໄລຍະຫ່າງຫາເຂດແດນດິນໃກ້ສຸດແມ່ນ 4 ແມັດ ແລະ ມີກຳແພງກໍ່ສູງ 3 ແມັດ (ລາຍລະອຽດມີຮູບພາບຕົວຈິງຄັດຕິດມາພ້ອມນີ້ດ້ວຍ).

ຕໍ່ບັນຫາດັ່ງກ່າວ ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ສົມທົບກັບຫ້ອງການ ຍທຂ ເມືອງ ສີໂຄດຕະບອງເອົາໃຈໃສ່ເຜີຍແຜ່ລະບຽບກົດໝາຍໃຫ້ພໍ່ແມ່ປະຊາຊົນເຂົ້າໃຈຢ່າງກວ້າງຂວາງ ແລະ ທົ່ວເຖິງ ພ້ອມກັນຈັດຕັ້ງປະຕິບັດລະບຽບການ ແລະ ກົດໝາຍຢ່າງເຂັ້ມງວດ, ປົນຈິດໃຈພົນລະເມືອງລາວທຸກຄົນມີສິດເທົ່າທຽມກັນພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍ ເພື່ອຮັບປະກັນຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນ ແລະ ຜູ້ປະກອບການດຳເນີນທຸລະກິດດັ່ງກ່າວ.

10. <u>ປະຊາຊົນ, ເມືອງໂພນໂຮງ, ແຂວງວຽງຈັນ ສະເໜີໃຫ້ລັດຖະບານຮັບຮູ້ບັນຫາກ່ຽວກັບ ຄ່າຊົດເຊີຍທີ່ດິນຂອງປະຊາຊົນທີ່ຖືກແລວກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ຈະໄດ້ຮັບຄ່າຊົດເຊີຍແທ້ ຫຼື ບໍ່, ເພາະປະຈຸບັນ ຍັງບໍ່ທັນໄດ້ຮັບຄ່າຊົດເຊີຍ.</u>

- <u>ຕອບ:</u> ອີງຕາມການລາຍງານຂອງ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງວຽງຈັນ ລາຍງານໃຫ້ຊາບວ່າ: ເມືອງໂພນໂຮງ ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ຈຳນວນ 24 ບ້ານ, 305 ຄອບຄົວ, ປະຈຸບັນໄດ້ສຳເລັດເບື້ອງຕົ້ນໃນການເກັບກຳຂໍ້ມູນລົງລາຍເຊັນ 7 ຝ່າຍເພື່ອເອົາເຂົ້າແຜນຊົດເຊີຍງວດທີ 3 ຂອງແຂວງວຽງຈັນ ແລະ ເປັນງວດທີ 1 ຂອງເມືອງໂພນໂຮງ ຢູ່ 4 ບ້ານຄື: ບ້ານໃໝ່, ບ້ານສີວິໄລ, ບ້ານໜອງຂອນ ແລະ ບ້ານໂພສົມບູນ. ສາເຫດທີ່ປະຊາຊົນມີຂໍ້ຂ້ອງໃຈນັ້ນ ກໍ່ເນື່ອງຈາກວ່າມີການສົນທຽບຊຸ້ງຊາວ່າ: ປະຈຸບັນນີ້ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ວັງວຽງ ໄດ້ທຳການຊົດເຊີຍໃຫ້ຜູ້ທີ່ຖືກຜົນກະທົບຢູ່ເຂດເມືອງໂພນໂຮງແລ້ວ ແຕ່ຜູ້ຖືກຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ-ລາວຈີນ ເຂດເມືອງໂພນໂຮງຍັງບໍ່ທັນໄດ້ຮັບການຊົດເຊີຍເທື່ອ, ສະນັ້ນ ຈຶ່ງເປັນສາເຫດໃຫ້ປະຊາຊົນໂທເຂົ້າສາຍດ່ວນ 1516 ດັ່ງກ່າວ.

  ຕໍ່ກັບບັນຫາດັ່ງກ່າວ ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ກະຊວງ ຍທຂ ໃນນາມຄະນະຮັບຜິດຊອບໄດ້ໂອນເງິນຄ່າຊົດເຊີຍໃຫ້ຄະນະຮັບຜິດຊອບວຽກທາງລົດໄຟຂັ້ນແຂວງ ເພື່ອຈ່າຍໃຫ້ປະຊາຊົນຜູ້ຖືກຜົນກະທົບເຂດແຂວງວຽງຈັນ ໄປແລ້ວຈຳນວນ 7.628,975,000 ກີບ, ສ່ວນທີ່ຍັງເຫລືອ ຄະນະຮັບຜິດຊອບຂັ້ນສູນກາງ ໄດ້ສົມທົບກັບ

ຄະນະກຳມະການໄກ່ເກ່ຍ ແຂວງວຽງຈັນ ສຸມໃສ່ການດຳເນີນການປະກອບເອກະສານຄົບຊຸດເພື່ອເອົາເຂົ້າແຜນງົບປະມານສະເໜີພາກສ່ວນກ່ຽວຂ້ອງອະນຸມັດໃຫ້ຖືກຕາມຂັ້ນຕອນ ແລະ ລະບຽບການທີ່ກ່ຽວຂ້ອງ ພາຍຫຼັງໄດ້ຮັບການອະນຸມັດແລ້ວ ຈະໄດ້ໂອນເງິນເຂົ້າບັນຊີຄະນະກຳມະການໄກ່ເກ່ຍ ຂັ້ນແຂວງ ແລະ ມອບໃຫ້ຄະນະຮັບຜິດຊອບເບີກຈ່າຍ ເປັນຜູ້ຈ່າຍເງິນຄ່າຊົດເຊີຍປະຊາຊົນ ສ່ວນທີ່ຍັງບໍ່ໄດ້ຮັບຕາມຄູ່ມືການເບີກຈ່າຍໂດຍໄວ.

11. <u>ປະຊາຊົນ, ບ້ານນາໂອ, ເມືອງແປກ, ແຂວງຊຽງຂວາງ ສະເໜີໃຫ້ລັດຖະບານຮັບຮູ້ບັນຫາກ່ຽວກັບ ໂຄງການກໍ່ສ້າງເສັ້ນທາງໄປຫາສະໜາມກິລາແຂວງຊຽງຂວາງ ເລີ່ມກໍ່ສ້າງມາແຕ່ປີ 2013 ນັ້ນ ໄດ້ກວມເອົາດິນຂອງປະຊາຊົນຈຳນວນຫຼາຍ; ປີ 2016 ປະຊາຊົນໄດ້ເຮັດໜັງສືສະເໜີໄປຫາຫ້ອງວ່າການປົກຄອງແຂວງຊຽງຂວາງແຕ່ບໍ່ໄດ້ຮັບການແກ້ໄຂເລີຍ; ມາຮອດປະຈຸບັນ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການດັ່ງກ່າວ ແມ່ນຍັງບໍ່ໄດ້ຮັບຄ່າຊົດເຊີຍ. ດັ່ງນັ້ນ, ຈຶ່ງຂໍໃຫ້ລັດຖະບານຊ່ວຍແກ້ໄຂດ້ວຍ.</u>

➢ ຕອບ: ອີງຕາມການລາຍງານຂອງ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງຊຽງຂວາງ ໃຫ້ຊາບວ່າ: ຕໍ່ກັບບັນຫາປະຊາຊົນບ້ານນາໂອ, ເມືອງແປກ ແຂວງຊຽງຂວາງ ສະເໜີຜ່ານທາງໂທລະສັບສາຍດ່ວນ ກ່ຽວກັບໂຄງການກໍ່ສ້າງເສັ້ນທາງເວັ້ນຕົວເມືອງໂພນສະຫວັນ ຂອງບໍລິສັດ ລາວສຳພັນ ເປັນຜູ້ຮັບເໝົາ ຜ່ານມາບໍລິສັດໄດ້ຊຳລະດັ່ງນີ້:

1) ໃນປີ 2013 ຜົນເສຍຫາຍເປັນມູນຄ່າ 216,000,000ກີບ ແມ່ນບໍລິສັດໄດ້ຊຳລະໄປແລ້ວ.

2) ໃນປີ 2015 ບໍລິສັດ ຜູ້ຮັບເໝົາ ໄດ້ລົງໄປແກ້ໄຂຊົດເຊີຍຄ່າເສຍຫາຍ ໂດຍນຳໃຊ້ກົນຈັກໄປບຸກເບີກເນື້ອທີ່ນາ, ໜອງປາ ແລະ ອື່ນໆ ຕາມເຈົ້າຂອງຜູ້ທີ່ຖືກຜົນກະທົບຕ້ອງການ ເປັນມູນຄ່າ 54,982,876 ກີບ, ມາຮອດປະຈຸບັນນີ້ຈຳນວນເນື້ອທີ່ນາຖືກຜົນກະທົບ ຍັງບໍ່ທັນໄດ້ຊົດເຊີຍເປັນຈຳນວນ 446,939,857 ກີບ, ຍ້ອນວ່າການຂຶ້ນແຜນກໍ່ສ້າງເບື້ອງຕົ້ນ ບໍ່ໄດ້ຄິດໄລ່ຄ່າຊົດເຊີຍເຂົ້າໃນໃບຄິດໄລ່, ປະຈຸບັນຄະນະຮັບຜິດຊອບໄດ້ທົບທວນກັບ ບໍລິສັດຮັບເໝົາ ພວມດຳເນີນການກວດກາຄືນລາຍລະອຽດ ເພື່ອຄົ້ນຄ້ວາຂຶ້ນແຜນ ແລະ ສືບຕໍ່ຊອກຫາວິທີຊຳລະໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຕາມຄວາມເໝາະສົມ.

ຕໍ່ບັນຫາດັ່ງກ່າວ ກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນຳໃຫ້ພະແນກ ຍທຂ ແຂວງຊຽງຂວາງ ສົມທົບກັບຫ້ອງການ ຍທຂ ເມືອງ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ເກັບກຳຂໍ້ມູນຜົນກະທົບໃຫ້ລະອຽດ, ຊັດເຈນ ແລ້ວນຳສະເໜີຄະນະຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນພິຈາລະນາແກ້ໄຂໃຫ້ປະຊາຊົນ ຕາມລະບຽບການ ແລະກົດໝາຍທີ່ກ່ຽວຂ້ອງ.

12. <u>ປະຊາຊົນ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ ສະເໜີໃຫ້ລັດຖະບານກຳນົດລາຄາປ້າຍລົດ ເຊັ່ນ: ປ້າຍເລກເປົ່າ, ປ້າຍເລກລຽງ, ປ້າຍເລກຄູ່ ເພື່ອບໍ່ໃຫ້ພະນັກງານ ຫລື ພາກສ່ວນທີ່ກ່ຽວຂ້ອງ ມີຊ່ອງຫວ່າງໃນການສວຍໃຊ້ໜ້າທີ່ຕຳແໜ່ງສໍ້ລາດບັງຫລວງ.</u>

➢ ຕອບ: ຜ່ານມາກົມຂົນສົ່ງ, ກະຊວງ ຍທຂ ໄດ້ປະຕິບັດຕາມລະບຽບການກ່ຽວກັບການປະມູນປ້າຍທະບຽນລົດ ເລກລຽງ ແລະ ເລກເປົ່າ ສະບັບລົງວັນທີ 14/11/2006. ແຕ່ໃນການຈັດຕັ້ງປະຕິບັດຕົວຈິງຜ່ານມາ ທຸກໆແຂວງ ບໍ່ໄດ້ມີການປະມູນ ມີແຕ່ຂາຍໃຫ້ບຸກຄົນທີ່ມີຄວາມສົນໃຈເທົ່ານັ້ນ. ສຳລັບປ້າຍທະບຽນລົດ ເລກລຽງ ແລະ ເລກເປົ່າລົດກຳແພງນະຄອນ ກົມຂົນສົ່ງໄດ້ອອກແຈ້ງການກ່ຽວກັບການກຳນົດການເກັບຄ່າທຳນຽມ (ຂາຍ) ປ້າຍເລກເປົ່າ, ເລກລຽງ ແລະ ເລກງາມ ແຕ່ກໍ່ບໍ່ເໝາະສົມກັບຄວາມຕ້ອງການຂອງສັງຄົມກ່ຽວກັບລາຄາປ້າຍດັ່ງກ່າວ ຈຶ່ງໄດ້ຖືກຍົກເລີກ. ສະນັ້ນ ນັບແຕ່ວັນທີ 1/2/2018 ເປັນຕົ້ນມາ ກົມຂົນສົ່ງໄດ້ຢຸດຕິການອະນຸມັດຂາຍປ້າຍດັ່ງກ່າວ. ພ້ອມດຽວກັນນີ້ ກົມຂົນສົ່ງພວມສົມທົບກັບພາກສ່ວນກ່ຽວຂ້ອງຮ່າງລະບຽບການປະມູນການຂາຍປ້າຍດັ່ງກ່າວຄືນໃໝ່ ພາຍຫຼັງໄດ້ຮັບອະນຸມັດແລ້ວຈະໄດ້ຈັດຕັ້ງປະຕິບັດ ໃຫ້ຖືກຕາມລະບຽບການໄດ້ກຳນົດອອກ.

13. <u>ປະຊາຊົນ ເມືອງຈັນທະບູລີ ສ່ອງແສງໃຫ້ລັດຖະບານຮູ້ວ່າ ເສັ້ນທາງບ້ານທົ່ງສ້າງນາງ, ບ້ານດົງປ່າແຫຼບ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ເປ່ເພຫຼາຍ, ຂຸມໃຫຍ່, ເລິກ ການສັນຈອນໄປ-ມາ ພົບຄວາມຫຍຸ້ງຍາກເຮັດໃຫ້ເກີດອຸປະຕິເຫດ. ຂໍໃຫ້ພາກສ່ວນກ່ຽວຂ້ອງລົງກວດກາ ແລະ ຊ່ວຍແກ້ໄຂ ເພື່ອໃຫ້ມີຄວາມສະດວກສະບາຍ.</u>

- ຕອບ: ຫ້ອງການ ກະຊວງ ຍທຂ ໄດ້ມີໜັງສືທາງລັດຖະການ ຫາທ່ານ ຫົວໜ້າຫ້ອງວ່າການປົກຄອງນະຄອນຫລວງວຽງຈັນ ເພື່ອນຳສະເໜີທ່ານ ຮອງເຈົ້າຄອງນະຄອນຫລວງ ເພື່ອຊີ້ນຳພະແນກ ຍທຂນະຄອນຫລວງ ແກ້ໄຂບັນຫາດັ່ງກ່າວ ຕາມການສະເໜີຂອງປະຊາຊົນ (ຕາມເອກະສານເລກທີ 24980/ຍທຂ.ຫກ, ລົງວັນທີ 31 ຕຸລາ 2018). ສໍາລັບການລາຍງານຜົນການແກ້ໄຂບັນຫາດັ່ງກ່າວ ຂອງພະແນກ ຍທຂ ນະຄອນຫລວງວຽງຈັນ ຄືກັບໃນ ຂໍ້ ທີ 1.

14. <u>ປະຊາຊົນ, ບ້ານເມືອງນ້ອຍຊຽງດາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສະເໜີໃຫ້ລັດຖະບານຮູ້ວ່າເສັ້ນທາງຕັດໃໝ່ໄປຫາບ້ານເມືອງນ້ອຍ ໄດ້ປູຄອນກີດແລ້ວ ແຕ່ເປັນຫຍັງຈິ່ງບໍ່ປູໃຫ້ຮອດຈຸດເຊື່ອມຕໍ່ກັນ ໄລຍະທາງປະໄວ້ນັ້ນ ຍັງເຫຼືອປະມານ 30-50 ແມັດ, ເຮັດໃຫ້ການສັນຈອນໄປມາຫຍຸ້ງຍາກຫຼາຍ. ດັ່ງນັ້ນ, ຈຶ່ງຂໍໃຫ້ພາກສ່ວນກ່ຽວຂ້ອງຊ່ວຍແກ້ໄຂບັນຫາດັ່ງກ່າວດ້ວຍ.</u>

- ຕອບ: : ຫ້ອງການ ກະຊວງ ຍທຂ ໄດ້ມີໜັງສືທາງລັດຖະການ ຫາທ່ານ ຫົວໜ້າຫ້ອງວ່າການປົກຄອງນະຄອນຫລວງວຽງຈັນ ເພື່ອນຳສະເໜີທ່ານ ຮອງເຈົ້າຄອງນະຄອນຫລວງ ເພື່ອຊີ້ນຳພະແນກ ຍທຂນະຄອນຫລວງ ແກ້ໄຂບັນຫາດັ່ງກ່າວຕາມການສະເໜີຂອງປະຊາຊົນ (ຕາມເອກະສານເລກທີ 24980/ຍທຂ.ຫກ, ລົງວັນທີ 31 ຕຸລາ 2018). ຍັງບໍ່ມີການລາຍງານຂອງຂອງພະແນກ ຍທຂ ນະຄອນຫລວງວຽງຈັນ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖື

ລັດຖະມົນຕີ

ດຣ ບຸນຈັນ ສິນທະວົງ

<u>ບ່ອນນຳສົ່ງ:</u>

- ທ່ານ ເລຂາທິການສະພາແຫ່ງຊາດ — 01 ສະບັບ ເພື່ອຊາບ.
- ທ່ານ ຮອງລັດຖະມົນຕີ ທ່ານລະ — 01 ສະບັບ.
- ສຳເນົາເກັບມ້ຽນ — 02 ສະບັບ.